# ສັນ ຍາ ການ ຄ້າ

## ລະຫວ່າງ

## ລັດຖະບານ ແຫ່ງ ລາຊະອານາຈັກໄທ

## ກັບ

## ລັດຖະບານ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ລັດຖະບານ ແຫ່ງ ລາຊະອານາຈັກໄທ ແລະ ລັດຖະບານ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ (ຊຶ່ງຕໍ່ໄປນີ້ເອີ້ນວ່າພາຄີຄູ່ສັນຍາ)

ດ້ວຍຄວາມປາດຖະໜາເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ລະຫວ່າງ ປະຊາຊົນປະເທດທັງສອງ ທີ່ເຄີຍມີມາແຕ່ບູຮານນະການໃຫ້ແໜ້ນແຟ້ນຍິ່ງຂຶ້ນ, ບົນຈິດໃຈຂອງຖະແຫລງການຮ່ວມ ລະຫວ່າງ ລັດຖະບານ ແຫ່ງ ລາຊະອານາຈັກໄທ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທັງສາມສະບັບທີ່ນາຍົກລັດຖະມົນຕີຂອງສອງປະເທດໄດ້ລົງນາມກັນ: ສະບັບລົງວັນທີ 6 ມັງກອນ 1979 (ພ.ສ.2522), ສະບັບລົງວັນທີ 4 ເມສາ 1979 (ພ.ສ.2522) ແລະ ສະບັບລົງວັນທີ 25 ພຶດສະຈິກາ ຄ.ສ.1988 (ພ.ສ.2531), ດ້ວຍຄວາມປະສົງ ເພື່ອແນໃສ່ປັບປຸງຄວາມສຳພັນ ດ້ານການຄ້າ ລະຫວ່າງສອງປະເທດໃຫ້ດີຂຶ້ນ ບົນພື້ນຖານແຫ່ງການເຄົາລົບ ຊຶ່ງເອກະລາດ ອະທິປະໄຕ ແລະ ພື້ນແຜ່ນດິນອັນຄົບຖ້ວນຊຶ່ງກັນແລະກັນ ສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ.

ໄດ້ຕົກລົງກັນຕໍ່ໄປນີ້ :

### ມາດຕາ 1.

ພາຄີ ຄູ່ສັນຍາ ຍິນດີສົ່ງເສີມ ແລະ ຂະຫຍາຍຄວາມສຳພັນທາງການຄ້າ ລະຫວ່າງສອງປະເທດ ພາຍໃນຂອບເຂດລະບຽບກົດໝາຍ ທີ່ໃຊ້ປະຕິບັດຢູ່ພາຍໃນຂອງແຕ່ລະປະເທດ.

### ມາດຕາ 2.

ພາຄີ ຄູ່ສັນຍາຈະເຮັດການຄ້າ ລະຫວ່າງກັນ ໂດຍມີເປົ້າໝາຍທີ່ຈະເພີ່ມປະລິມານການຄ້າ ລະຫວ່າງປະເທດທັງສອງ ໃຫ້ຫລາຍຂຶ້ນກວ່າເກົ່າ ພ້ອມທັງຈະພະຍາຍາມແກ້ໄຂ ບັນຫາອຸປະສັກໃນການຄ້າ ເພື່ອເຮັດໃຫ້ດຸນການຄ້າ ລະຫວ່າງປະເທດທັງສອງ ຢູ່ໃນລະດັບເທົ່າທຽມກັນ ເທົ່າທີ່ສາມາດຈະເຮັດໄດ້.

### ມາດຕາ 3.

ພາຄີ ຄູ່ສັນຍາ ຈະຮ່ວມມືກັນປະຕິບັດຫລັກການ ກ່ຽວກັບປະເທດທີ່ໄດ້ຮັບອະນຸເຄາະຍິ່ງກວ່າໝູ່ ໃນດ້ານພາສີອາກອນ ແລະ ຄ່າໃຊ້ຈ່າຍອື່ນໆ ພ້ອມທັງລະບຽບຫລັກການ ກ່ຽວກັບສິນຄ້າ ຂາເຂົ້າ-ຂາອອກ ຈາກປະເທດໜຶ່ງ ໄປຍັງອີກປະເທດໜຶ່ງ.

ບົດບັນຍັດດັ່ງກ່າວນີ້ ຈະບໍ່ໃຊ້ປະຕິບັດຕໍ່ພາຄີຄູ່ສັນຍາ ຝ່າຍໃດຝ່າຍໜຶ່ງ ທີ່ໄດ້ຮັບ ຫຼື ອາດຈະໄດ້ຮັບການຍົກເວັ້ນ ແລະ ເອກະສິດ ເນື່ອງຈາກການເປັນສະມາຊິກຂອງອົງການ ລະຫວ່າງຊາດ ດ້ານພາສີອາກອນ ແລະ ການຄ້າ ຫຼື ສະມາຄົມ ລະດັບພູມີພາກ ເພື່ອການຮ່ວມມືດ້ານເສດຖະກິດ ທີ່ມີຢູ່ແລ້ວ ຫຼື ອາດຈະກໍ່ຕັ້ງຂຶ້ນ ໃນອະນາຄົດ ຮວມທັງປະເທດທີສາມ ທີ່ມີຂໍ້ຕົກລົງ ກັບພາຄີຄູ່ສັນຍາ ຝ່າຍໃດຝ່າຍໜຶ່ງ ກ່ຽວກັບການຍົກເວັ້ນພາສີ ຊ້ອນ ຫຼື ຍົກເວັ້ນພາສີ ຊຶ່ງກັນ ແລະ ກັນ.

<u>ມາດຕາ 4.</u>

ເພື່ອຄວາມຮ່ວມມືຊ່ວຍເຫຼືອ ໃນການຄ້າ ແກ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນຖານະທີ່ເປັນປະເທດພັດທະນານ້ອຍທີ່ສຸດ ຊຶ່ງເປັນປະເທດເພື່ອນບ້ານ ທີ່ມີຊາຍແດນຕິດຕໍ່ກັນ ມີຄວາມສຳພັນໃກ້ຊິດມາເປັນເວລາດົນນານ ແລະ ບໍ່ມີທາງອອກສູ່ທະເລ ລັດຖະບານ ແຫ່ງ ລາຊະອານາຈັກໄທ ຈະໃຫ້ສິດທິພິເສດ ທາງ ພາສີແກ່ສິນຄ້າ ທີ່ມີຖິ່ນກຳເນີດ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມບັນຊີ ສາລະບານອັດຕາພາສີ ຊຶ່ງຝ່າຍໄທ ຈະແຈ້ງໃຫ້ຊາບ.

ການໃຫ້ສິດທິພິເສດ ທາງພາສີ ຕາມວັກ 1 ນີ້ ລັດຖະບານ ແຫ່ງ ລາຊະອານາຈັກໄທ ຈະພິຈາລະນາ ປັບປຸງ ເພື່ອຄວາມເໝາະສົມ ຕາມທີ່ເຫັນສົມຄວນ.

<u>ມາດຕາ 5.</u>

ພາຄີ ຄູ່ສັນຍາ ໄດ້ກຳນົດ ລາຍການສິນຄ້າຂາອອກ ປະເພດຫຼັກ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປຍັງ ລາຊະອານາຈັກໄທ ໄວ້ໃນບັນຊີ "ກ" ແລະ ລາຍການສິນຄ້າ ປະເພດຫຼັກ ຂອງລາຊະອານາຈັກໄທ ໄປຍັງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄວ້ໃນ ບັນຊີ "ຂ" ທີ່ຂັດຕິດສັນຍາສະບັບນີ້.

<u>ມາດຕາ 6.</u>

ການດຳເນີນການຄ້າ ລະຫວ່າງ ພາຄີຄູ່ສັນຍາ ຈະຕ້ອງປະຕິບັດ ໂດຍບໍລິສັດ ຫຼື ອົງການ ທີ່ໄດ້ຮັບອະນຸຍາດໃຫ້ເຮັດການຄ້າ ຂາເຂົ້າ-ຂາອອກ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບບັນດາບໍລິສັດ ຫຼື ອົງການທີ່ໄດ້ຮັບອະນຸມັດ ຈາກລັດຖະບານ ແຫ່ງ ລາຊະອານາຈັກໄທ ພາຍໃນຂອບເຂດຂອງສັນຍານີ້.

ການກຳນົດລາຄາສິນຄ້າ ໃຫ້ປະຕິບັດ ໂດຍການຕົກລົງຮ່ວມກັນ ຂອງບໍລິສັດ ຫຼື ອົງການ ຂອງສອງຝ່າຍ ໃນເວລາທີ່ເຮັດສັນຍາຊື້ຂາຍຜູກພັນກັນ ບົນພື້ນຖານລາຄາໃນຕະຫຼາດ ສາກົນຂອງໂລກ ແລະ ຫຼື ລາຄາໃນຕະຫຼາດ ສາກົນຂອງພູມີພາກ.

ການຊຳລະເງິນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບ ລາຊະອານາຈັກໄທ ຈະປະຕິບັດ ດ້ວຍເງິນຕາຕ່າງປະເທດ ສະກຸນທີ່ແລກປ່ຽນໄດ້ ໂດຍເສລີ ໂດຍຜ່ານ ທະນາຄານ ທີ່ໄດ້ຮັບມອບໝາຍ ຈາກລັດຖະບານ ຂອງແຕ່ລະຝ່າຍ.

## ມາດຕາ 7.

ເພື່ອຄວາມເປັນລະບຽບຮຽບຮ້ອຍ ໃນການດຳເນີນການຄ້າຊາຍແດນ ລະຫວ່າງກັນ ພາຄີ ຄູ່ສັນຍາ ເຫັນດີວາງລະບຽບ ກ່ຽວກັບການຄ້າຊາຍແດນ ລະຫວ່າງສອງປະເທດ ໃຫ້ຊັດເຈນ ແລະ ເໝາະສົມ,ສະດວກໃຫ້ແກ່ການຄຸ້ມຄອງ ແລະ ກວດກາ ຕາມດ່ານຊາຍແດນ ຂອງສອງຝ່າຍ.ເຈົ້າໜ້າທີ່ ປະຈຳດ່ານຊາຍແດນ ແຕ່ລະແຫ່ງ ຂອງສອງປະເທດ ຈະໄດ້ພົບປະຫາລືກັນ ເພື່ອແລກປ່ຽນຂໍ້ຄິດເຫັນ ດ້ານບັນຫາ ໃນທາງປະຕິບັດ ກ່ຽວກັບຄວາມຮ່ວມມືກັນ.

## ມາດຕາ 8.

ທຸກ ຫົກເດືອນ ພາຄີ ຄູ່ສັນຍາ ຈະໃຫ້ຄະນະວິຊາການ ຮ່ວມ ສອງຝ່າຍ ພົບປະກັນ ເພື່ອ ສະຫຼຸບ ຜົນການປະຕິບັດ ແລະ ວາງຂໍ້ກຳນົດ ລາຍລະອຽດ ສຳລັບໄລຍະຕໍ່ໄປ ກ່ຽວກັບບັນຊີສິນຄ້າ ປະລິມານ ແລະ ມູນຄ່າໃຫ້ເປັນໄປຕາມບົດບັນຍັດ ຂອງສັນຍາ ແລະ ສະພາບຄວາມເປັນຈິງ ຂອງຕະຫຼາດ ຫາກເກີດການຂາດດຸນການຄ້າ ພາຄີ ຄູ່ສັນຍາ ຈະຫາ ມາດຕະການແກ້ໄຂຮ່ວມກັນ ຢ່າງເໝາະສົມ.

ໃນກໍລະນີ ຈຳເປັນ ພາຄີ ຄູ່ສັນຍາ ທັງສອງຝ່າຍ ຈະມີການປະຊຸມ ເພື່ອປຶກສາຫາລື ແລະ ແກ້ໄຂ ບັນຫາທີ່ອາດຈະເກີດຂຶ້ນ ໃນຂອບເຂດ ຂອງສັນຍາສະບັບນີ້ໄດ້ ຕາມການສະເໜີ ຈາກ ຝ່າຍໃດ ຝ່າຍໜຶ່ງ.

ຄະນະຜູ້ແທນການຄ້າ ລະດັບ ລັດຖະມົນຕີ ທັງສອງປະເທດ ຈະພົບປະຫາລືກັນ ປີລະຄັ້ງ ໂດຍໝູນວຽນກັນ ເປັນເຈົ້າພາບ ເພື່ອປຶກສາຫາລື ສະຫຼຸບຜົນ ພິຈາລະນາ ຂໍ້ສະເໜີ ຂອງຄະນະ ວິຊາການ ຮ່ວມ ແລະ ສະແຫວງຫາຫົນທາງ ເພື່ອແກ້ໄຂ ບັນຫາ ທີ່ອາດຈະເກີດຂຶ້ນ ບົນພື້ນຖານ ຂອງ ສັນຍານີ້. ຫາກເຫັນວ່າ ມີຄວາມຈຳເປັນຮີບດ່ວນ ຄະນະຜູ້ແທນການຄ້າ ລະດັບ ລັດຖະມົນຕີ ສອງຝ່າຍ ອາດນັດໝາຍ ເພື່ອພົບປະຫາລືກັນ ເປັນກໍລະນີພິເສດ.

## ມາດຕາ 9,

ສັນຍາສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ ມີອາຍຸປະຕິບັດໜຶ່ງປີ ແລະ ຈະໄດ້ຮັບການຕໍ່ອາຍຸ ໄປເລື້ອຍໆ ໂດຍອັດຕະໂນມັດ ຈົນກວ່າ ພາຄີ ຄູ່ສັນຍາ ຝ່າຍໃດຝ່າຍໜຶ່ງ ຈະແຈ້ງ ຍົກເລີກ ເປັນລາຍລັກອັກສອນ ລ່ວງໜ້າ ເປັນເວລາ ສາມເດືອນ.

ຫາກລັດຖະບານ ຝ່າຍໃດຝ່າຍນຶ່ງ ໄດ້ຮອງຂໍ ເປັນລາຍລັກອັກສອນ ສັນຍາສະບັບນີ້ ອາດຈະໄດ້ຮັບການແກ້ໄຂ ໂດຍການເຫັນດີ ຂອງທັງສອງຝ່າຍ.

ເມື່ອສັນຍາ ສະບັບນີ້ ມີຜົນສັກສິດ ສັນຍາວ່າດ້ວຍການຄ້າ ລະຫວ່າງ ລັດຖະບານ ແຫ່ງ ລາຊະອານາຈັກໄທ ກັບ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງໄດ້ ເຊັນກັນ ທີ່ ນະຄອນວຽງຈັນ ເມື່ອວັນທີ່ 1 ມິຖຸນາ 1978 (ພ.ສ.2531) ນັ້ນ ຈະຖືກຍົກເລີກ.

ເຮັດທີ່ວຽງຈັນ, ວັນທີ່ 20 ເດືອນ ມິຖຸນາ 1991 (ພ.ສ.2534) ເປັນສອງສະບັບ ແຕ່ລະສະບັບເປັນສອງພາສາ, ພາສາໄທ ແລະ ພາສາລາວ, ທັງສອງສະບັບນີ້ ມີຄຸນຄ່າເທົ່າທຽມກັນ.

| | |
|---|---|
| ສຳລັບ ລັດຖະບານ ແຫ່ງ<br>ລາຊະອານາຈັກໄທ | ສຳລັບ ລັດຖະບານ ແຫ່ງສາທາລະນະລັດ<br>ປະຊາທິປະໄຕ ປະຊາຊົນລາວ |
| ນາຍ ອາສາ ສາຣະສິນ<br>ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ | ທ່ານ ຄຳພູຍ ແກ້ວບົວລະພາ<br>ລັດຖະມົນຕີ ກະຊວງການຄ້າ ແລະທ່ອງທ່ຽວ |

<u>ບັນຊີ " ກ "</u>

ລາຍການສິນຄ້າ ຂາອອກ ປະເພດຫຼັກ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສົ່ງໄປຍັງ ລາຊະອານາຈັກໄທ.

1. <u>ປະເພດໄມ້ ແລະ ຫວາຍ</u>.
   - 1.1 ໄມ້ແປຮູບ ແລະ ຜະລິດຕະພັນໄມ້, ໂຕະ ຕັ່ງ (ເຟີນີເຈີ)
   - 1.2 ໄມ້ສຳເລັດຮູບ (ໄມ້ອັດ, ໄມ້ວີເນຍ, ໄມ້ສະໄລ, ໄມ້ປາເກ້)
   - 1.3 ຜະລິດຕະພັນຫວາຍ
   - 1.4 ໄມ້ໄຜ່ ແລະ ຜະລິດຕະພັນໄມ້ໄຜ່.

2. <u>ປະເພດ ກະສິກຳ</u>.
   - 2.1 ງາ, ຖົ່ວສາ, ໝາກແໜ່ງ, ໝາກເລັ່ນ
   - 2.2 ເຄື່ອງປ່າຂອງນາ (ຄັ່ງ, ຢາງ, ແກ່ນໝາກມ່ວງຫິມະພານ, ປ່າໝັ້ນເມືອງ, ປ່າງແປກ)
   - 2.3 ປ່ານ, ຝ້າຍ, ງິ້ວ
   - 2.4 ແກ່ນຝ້າຍ, ແກ່ນໝາກງິ້ວ.

3. <u>ປະເພດສັດລ້ຽງ</u>.
   - 3.1 ງົວ, ຄວາຍ
   - 3.2 ເນື້ອສັດ

4. <u>ປະເພດ ອຸດສາຫະກຳ</u>.
   - 4.1 ພະລັງໄຟຟ້າ
   - 4.2 ແຮ່ທາດ
   - 4.3 ພອຍ
   - 4.4 ຖ່ານຫີນ
   - 4.5 ເຄື່ອງຫັດຖະກຳ
   - 4.6 ສິນຄ້າ ອື່ນໆ ທີ່ບໍ່ຂັດກັບລະບຽບການນຳເຂົ້າຂອງປະເທດໄທ.

## ບັນຊີ " ຂ "

ລາຍການສິນຄ້າປະເພດຫຼັກ ຂອງ ລາຊະອານາຈັກໄທ ສົ່ງໄປຍັງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

1. ປະເພດອາຫານ ແລະ ເຄື່ອງດື່ມ:
   - 1.1 ເຂົ້າ
   - 1.2 ນ້ຳຕານ
   - 1.3 ອາຫານກະປ໋ອງ
   - 1.4 ແປ້ງນົວ
   - 1.5 ເຄື່ອງ ບໍລິໂພກ ອື່ນໆ

2. ປະເພດ ຍານພາຫະນະ:
   - 2.1 ລົດຍົນ, ລົດຈັກ, ລົດຖີບ
   - 2.2 ອາໄຫລ (ລົດຍົນ-ລົດຈັກ-ລົດຖີບ)
   - 2.3 ໝໍ້ໄຟ

3. ປະເພດເຄື່ອງມື ແລະ ອຸປະກອນກໍ່ສ້າງ:
   - 3.1 ລົດຮັບໃຊ້ໃນງານກໍ່ສ້າງ ຕ່າງໆ
   - 3.2 ວັດຖຸກໍ່ສ້າງອື່ນໆ
   - 3.3 ເຫຼັກເສັ້ນ

4. ປະເພດເຄື່ອງມື ແລະ ອຸປະກອນການກະເສດ:
   - 4.1 ລົດໄຖນາ, ລົດອີແຕນ
   - 4.2 ເຄື່ອງສູບນ້ຳ
   - 4.3 ຢາປາບສັດຕູພືດ
   - 4.4 ອາຫານສັດ
   - 4.5 ເຄື່ອງມື ແລະ ອາໄຫລ່ກະເສດ

5. ປະເພດສິນຄ້າທົ່ວໄປ:
   - 5.1 ເຄື່ອງໄຟຟ້າ
   - 5.2 ເສື້ອຜ້າ, ແພນແພ, ເຄື່ອງນຸ່ງ
   - 5.3 ຖ່ານໄຟສາຍ
   - 5.4 ເຄື່ອງໃຊ້ສຳນັກງານ, ເຄື່ອງປະດັບ
   - 5.5 ສິນຄ້າຫັດຖະກຳ
   - 5.6 ເຂົ້າໜົມ
   - 5.7 ຢາປົວພະຍາດ
   - 5.8 ສິນຄ້າອື່ນ ໆ ທີ່ບໍ່ຂັດກັບລະບຽບການສົ່ງອອກຂອງປະເທດໄທ.